ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສຳເລັດການເຂົ້າຮ່ວມ ກອງປະຊຸມທະນາຄານໂລກ ແລະ ກອງທຶນການເງິນສາກົນ ປະຈຳປີ 2021 ຜ່ານລະບົບທາງໄກ (The Annual Meetings 2021 of the World Bank Group and International Monetary Fund)




ໃນລະຫວ່າງວັນທີ 4-24 ຕຸລາ 2021 ທ່ານ ນ. ວັດທະນາ ດາລາລອຍ, ຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະໄດ້ສຳເລັດການເຂົ້າຮ່ວມ ກອງປະຊຸມທະນາຄານໂລກ ແລະ ກອງທຶນການເງິນສາກົນ ປະຈຳປີ 2021 ຜ່ານລະບົບ ອອນລາຍ (The Annual Meetings 2021 of the World Bank Group and International Monetary Fund) ແລະ ມີບັນດາການຊອງການເງິນຂອງປະເທດສະມາຊິກເຂົ້າຮ່ວມ.

ໃນກອງປະຊຸມ IMF ໄດ້ລາຍງານສະພາບເສດຖະກິດໂລກ ແລະ ພາກພື້ນໃນປີ 2021 ຄາດວ່າຈະຂະຫຍາຍຕົວໃນລະດັບ 5,9% ແລະ 2,6% ສຳລັບເສດຖະກິດອາຊຽນ ແລະ ປີ 2022 ຄາດວ່າເສດຖະກິດໂລກຈະຂະຫຍາຍຕົວໃນລະດັບ 4,9% ແລະ 5,5% ສຳລັບເສດຖະກິດອາຊຽນ ເນື່ອງຈາກການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19 ໄດ້ສົ່ງຜົນກະທົບໃຫ້ແກ່ການດຳເນີນກິດຈະກຳທາງເສດຖະກິດ. ເຖິງຢ່າງໃດກໍ່ດີ, ການຟື້ນຕົວຂອງເສດຖະກິດແຕ່ລະປະເທດແມ່ນມີຈັງຫວະທີ່ແຕກຕ່າງກັນ ເນື່ອງຈາກຄວາມສາມາດຂອງການເຂົ້າເຖິງວັກຊີນ

ຂອງແຕ່ລະປະເທດແມ່ນຍັງມີຄວາມແຕກໂຕນ ໂດຍສະເພາະໃນປະເທດທີ່ພັດທະນາແລ້ວ ແລະ ປະເທດທີ່ກຳລັງພັດທະນາ.

ສຳລັບ ສປປ ລາວ, IMF ໄດ້ປະເມີນການຂະຫຍາຍຕົວເສດຖະກິດຢູ່ໃນລະດັບ 2,1% ໃນປີ 2021 ແລະ 4,2% ໃນປີ 2022 ແລະ IMF ຈະໄດ້ສືບຕໍ່ເຮັດວຽກຮ່ວມກັບ ທຫລ ແລະ ຂະແໜງການທີ່ກ່ຽວຂ້ອງໃນການປະເມີນເສດຖະກິດມະຫາພາກຂອງ ສປປ ລາວ ປະຈຳປີ 2021 ພາຍໃຕ້ມາດຕາ IV ຂອງ IMF (IMF Article IV Consultation 2021) ຊຶ່ງຈະຈັດຂຶ້ນໃນເດືອນ ທັນວາ ປີ 2021 ແນໃສ່ການປຶກສາຫາລື 4 ບັນຫາຕົ້ນຕໍຄື: (1) ການວິເຄາະເສດຖະກິດມະຫາພາກ; (2) ການວິເຄາະຄວາມເຂັ້ມແຂງຂອງຂະແໜງການທະນາຄານ ແລະ ການຄຸ້ມຄອງທະນາຄານທຸລະກິດ; (3) ການປະເມີນການບໍລິຫານງານພາກລັດ; ແລະ (4) ວຽກງານການຊຳລະດິຈິຕອນ ແລະ ສະກຸນເງິນດິຈິຕອນຂອງທະນາຄານກາງ (CBDC).

ຜ່ານການປຶກສາຫາລື ແລະ ປະກອບຄຳຄິດເຫັນຢ່າງຟົດຟື້ນ, ທ່ານ ນາງ ວັດທະນາ ດາລາລອຍ, ຮອງຜູ້ວ່າການ ທຫລ ໄດ້ສະແດງຄວາມຂອບໃຈມາຍັງ WBG ແລະ IMF ທີ່ໃຫ້ການສະໜັບສະໜູນດ້ານງົບປະມານ, ວຽກງານວິຊາການ ແລະ ໄດ້ກ່າວຕ້ອນຮັບໃນການປະເມີນເສດຖະກິດມະຫາພາກ ສປປ ລາວ ປະຈຳປີ 2021 ພາຍໃຕ້ມາດຕາ IV ຂອງ IMF ທີ່ຈະມາເຖິງໃຫ້ໄດ້ຮັບໝາກຜົນຕາມເປົ້າໝາຍ ແລະ ມີປະສິດທິພາບຍິ່ງຂຶ້ນກວ່າເກົ່າ.

❖ **ຂ່າວ-ພາບ: ກົມຮ່ວມມືສາກົນ, ທະນາຄານແຫ່ງ ສປປ ລາວ**

*ຢູ່ເມືອງລາວໃຊ້ແຕ່ເງິນກີບລາວ*